ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 01 ຫາ 05 ເມສາ 2024




ກອງປະຊຸມ ຄະນະຊີ້ນຳໂຄງການ FLEGT-FC ຄັ້ງທີ 1

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມ ຄະນະຊີ້ນຳໂຄງການສະໜັບສະໜູນທາງດ້ານການເງິນ ແຜນງານການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT-FC) ຄັ້ງທີ 1

ໃນວັນທີ 27 ມິຖຸນາ 2024 ນີ້, ທີ່ນະຄອນໄກສອນພົມວິຫານ ແຂວງສະຫວັນນະເຂດ ໂຄງການສະໜັບສະໜູນທາງດ້ານການເງິນ ແຜນງານການຈັດຕັ້ງປະຕິບັດກົດຫມາຍ ວ່າດ້ວຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT-FC), ໄດ້ຈັດກອງປະຊຸມ ຄະນະຊີ້ນຳໂຄງການຄັ້ງທີ 1 ຂຶ້ນ ໂດຍການເປັນປະທານຂອງ ທ່ານ ທອງພັດ ວົງມະນີ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ເຂົ້າຮ່ວມມີຫົວໜ້າ-ຮອງຫົວໜ້າກົມກວດກາປ່າໄມ້, ກົມປ່າໄມ້, ກົມແຜນການ ແລະ ການຮ່ວມມື, ຄະນະຊີ້ນຳໂຄງການຂັ້ນສູນກາງ, ຂັ້ນແຂວງຈາກ 3 ແຂວງເປົ້າຫມາຍຈັດຕັ້ງປະຕິບັດໂຄງການ ຄື: ແຂວງຫລວງພະບາງ, ແຂວງວຽງຈັນ ແລະ ແຂວງສະຫວັນນະເຂດ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອຮັບຟັງຜົນການກະກຽມການຈັດຕັ້ງປະຕິບັດໂຄງການ, ຊຶ່ງລວມເອົາທັງ ແຜນວຽກ ແລະ ແຜນງົບປະມານປະຈຳປີ 2024, ການກະກຽມດ້ານການຈັດຕັ້ງພະນັກງານ, ດ້ານການເງິນ ແລະ ອຸປະກອນ, ພາຫານະທີ່ຈຳເປັນ ພ້ອມທັງປຶກສາຫາລືບັນຫາສິ່ງທ້າທາຍຕ່າງໆທີ່ຍັງຄ້າງຄາ ແລະ ພ້ອມກັນຫາວິທີທາງແກ້ໄຂໃນຕໍ່ໜ້າ, ໃນທີ່ປະຊຸມ ທ່ານ ຄຳເຜືອ ສີຣິວົງ ຮອງຫົວຫນ້າກົມກວດກາປ່າໄມ້ ໄດ້ລາຍງານກ່ຽວກັບການກະກຽມໂຄງການໃຫ້ຮູ້ວ່າ:ໂຄງການແມ່ນໄດ້ເລີ່ມກະກຽມໃນປີ 2022 ແລະ ມີໄລຍະຈັດຕັ້ງປະຕິບັດໂຄງການຮອດປີ 2027, ມີພື້ນທີ່ທົດລອງຈັດຕັ້ງປະຕິບັດຢູ່ 3 ແຂວງຄື:ແຂວງຫລວງພະບາງ,ແຂວງວຽງຈັນ ແລະ ແຂວງສະຫວັນນະເຂດ, ມາຮອດປັດຈຸບັນຄວາມຄືບໜ້າແມ່ນສຳເລັດການສ້າງຕັ້ງຄະນະຊີ້ນຳຂັ້ນສູນກາງ, ຂັ້ນແຂວງ ແລະ ກອງເລຂາໂຄງການ, ໄດ້ປັບປຸງ ແລະ ຮັບຮອງ



ກອບວຽກ log Fram, ແຜນວຽກ ແລະ ກອບງົບປະມານ ປີ 2022-2027, ໄດ້ສ້າງ ແລະຮັບຮອງເອົາແຜນວຽກ ແລະ ງົບປະມານປະຈຳປີ 2023-2024 ແລະ ປະຈຳໄຕມາດທີ 1 ໂດຍ NPC ແລະ KFW ສ້າງ ແລະ ຮັບຮອງເອົາແຜນຈັດຊື້, ພ້ອມທັງໄດ້ລິເລີ່ມເກັບກຳຂໍ້ມູນພື້ນຖານ ແລະ ອອກແບບລະບົບ ແລະ ບາງວິທີການດ້ານເຕັກນິກ, ໃນກອງປະຊຸມຄັ້ງນີ້ຜູ້ເຂົ້າຮ່ວມຍັງໄດ້ພ້ອມກັນປະກອບຄຳຄິດເຫັນກ່ຽວກັບຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ຂອງການຈັດຕັ້ງປະຕິບັດໂຄງການແລກປ່ຽນບົດຮຽນໃນໜ້າວຽກທີ່ຍັງຄົງຄ້າງທີ່ຕ້ອງໄດ້ແກ້ໄຂ ເພື່ອໃຫ້ການຈັດຕັ້ງປະຕິບັດໂຄງການຄ່ອງໂຕໃນຕໍ່ໜ້າ,ໃນທ້າຍຂອງກອງປະຊຸມທ່ານປະທານຍັງໄດ້ໃຫ້ທິດຊີ້ນຳໂດຍໄດ້ເນັ້ນໃຫ້ ສືບຕໍ່ກຳນົດລະບອບເຮັດວຽກຂອງຄະນະຊີ້ນຳໃຫ້ເປັນລະບົບ ເພື່ອໃຫ້ການບໍລິຫານໂຄງການນຳເນີນຢ່າງໂລ່ງລ່ຽນ, ຄຸ້ມຄອງການນຳໃຊ້ແຫຼ່ງທຶນໃຫ້ມີຄວາມໂປ່ງໃສ່ ພ້ອມທັງຮຽກຮ້ອງໃຫ້ການນຳພະແນກ ກະສິກຳ ແລະ ປ່າໄມ້ ແຂວງຂອງ 3 ແຂວງ ເປົ້າໝາຍໂຄງການ ສຸມໃສ່ເຊີດຊູໜ້າທີ່ເພື່ອໃຫ້ການຈັດຕັ້ງປະຕິບັດໂຄງການປະສົບຜົນສຳເລັດ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;